ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ **15,** ເດືອນ ພຶສພາ **2005 ( 05- 15- 2005 )**

---

## <u>ຫລີກຈາກຜົນຂອງຄວາມບາບທີ່ຕາມມາ</u>

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ປະຖົມມະການ 19: 12-17 , 23- 29

<u>ພຣະຄັມພີແຫ່ງຄວາມຈິງ:</u> ພຣະເຈົ້າໄດ້ຊົງຕັດສິນຄວາມບາບ, ແຕ່ພຣະອົງຊົງມີພຣະທັຍເມດຕາແລະຕ້ອງການໃຫ້ໄພ່ພົນຂອງພຣະອົງໃຫ້ຫລີກໜີຈາກຜົນທີ່ຕາມມາຂອງຄວາມບາບທຸກຢ່າງ.

<u>ຜົນສະທ້ອນຕໍ່ຊີວິດ:</u> ເພື່ອຊ່ວຍໃຫ້ທ່ານໄດ້ຊອກຫາການຊ່ວຍເຫລືອຈາກພຣະເຈົ້າໃນການທີ່ຈະຫລີກໜີຈາກຜົນທີ່ຕາມມາຂອງຄວາມບາບທຸກຢ່າງ.

ເປັນຫຍັງຂ້າພະເຈົ້າຈຶ່ງຕ້ອງມີຄວາມກັງວົນໃນເຣື່ອງຂອງຄວາມບາບແລະຜົນທີ່ຈະຕາມມາ?

ຄຣູສອນໂຮງຮຽນວັນອາທິດຜູ້ນຶ່ງຖາມວ່າ " ຄວາມບາບແມ່ນຫຍັງ? " ເດັກນັກຮຽນນ້ອຍຜູ້ຍິງຄົນນຶ່ງຕອບວ່າ " ຄວາມບາບຄືບໍ່ເຮັດໃຫ້ພຣະເຈົ້າເສັຍພຣະທັຍ " ທີ່ເກີດຂຶ້ນດ້ວຍຄວາມຕັ້ງໃຈທຸກຢ່າງ, ຄໍາຕອບຂອງນາງແມ່ນຖືກເປົ້າໝາຍແລ້ວ. ແຕ່ບໍ່ໄດ້ໝາຍຄວາມວ່າບາບບໍ່ແມ່ນບັນຫາໃຫຍ່ແຕ່ແມ່ນສິ່ງທີ່ໜ້າຢ້ານກົວທີ່ສຸດ. ເພາະວ່າພຣະເຈົ້າໄດ້ໃຫ້ຄໍາສັນຍາໄວ້ວ່າພຣະອົງຈະຊົງພິພາກສາຜູ້ທີ່ບໍ່ເຊື່ອຟັງພຣະອົງ.

ຕາມທັມມະຊາດຂອງມະນຸດແມ່ນປະຕິເສດໃນເຣື່ອງການເຮັດບາບແລະການພິພາກສາ. ແມ້ແຕ່ຜູ້ທີ່ມີຄວາມເຊື່ອທີ່ເຂັ້ມແຂງແລ້ວກໍຕາມກໍແມ່ນຕ້ອງໄດ້ລະວັງຢູ່ສເມີຕໍ່ຄວາມບາບ. ແຕ່ພຣະເຈົ້າຜູ້ມີຄວາມເມດຕາໄດ້ໃຫ້ອະພັຍຢູ່ຄືພຣະອົງໄດ້ສົ່ງພຣະບຸດຂອງພຣະອົງ, ຄືພຣະໂລຫິດຂອງພຣະບຸດໄດ້ລຶບລ້າງຄວາມບາບໃຫ້ແກ່ຜູ້ທີ່ສັນຍາທີ່ຈະເຊື່ອແລະຕິດຕາມພຣະອົງ. ຕ້ອງເຂົ້າໃຈວ່າເຖິງ ແມ່ນວ່າຄວາມບາບຈະຖືກລຶບລ້າງແລ້ວແຕ່ຜົນທີ່ຕາມມາຂອງມັນຍັງຄົງມີຜົນຕໍ່ຜູ້ທີ່ເຮັດບາບແລະຕໍ່ໄປເຖິງຄົນອື່ນ ໆ.

### 1. <u>ຄວາມບາບນໍາໄປສູ່ການພິພາກສາຂອງພຣະເຈົ້າ</u>: ( ປະຖົມມະການ: 19: 12-14 )

ສອງໃນຈໍານວນເທວະດາສາມຕົນໄດ້ໄປປາກົດໃຫ້ອັບຣາຮາມເຫັນແລະບອກກັບເພິ່ນວ່າພຣະເຈົ້າຈະທໍາລາຍເມືອງໂຊດົມແລະເມືອງໂກໂມຣາ ປະຊາຊົນທັງໝົດເປັນຄົນຊົ່ວຮ້າຍແລະຈະເປັນໂອກາດສຸດທ້າຍ. ອັບຣາຮາມຮູ້ວ່າຍັງມີຫລານຊາຍທີ່ຊື່ໂລດພ້ອມແລະຄອບຄົວທີ່ໄດ້ຕັ້ງຖິ່ນຖານຢູ່ທີ່ນັ້ນແລະເພິ່ນກໍເປັນຫ່ວງແລະຢ້ານຈະມີອັນຕະລາຍເກີດຂຶ້ນກັບພວກເຂົາ. ເພິ່ນໄດ້ມີການຂໍຕໍ່ລອງກັບພຣະເຈົ້າແລະພຣະອົງກໍໄດ້ຕອບຕົກລົງຖ້າວ່າເມືອງນັ້ນຫາກມີຄົນ 10 ຄົນທີ່ຍັງເປັນຄົນສິນທັມຢູ່ພຣະອົງຈະບໍ່ທໍາລາຍ ( 18: 16-32 ).

ເທວະດາອີກສອງຕົນກໍໄດ້ແປງກາຍເປັນມະນຸດໄປປາກົດຕົວທີ່ເມືອງໂຊດົມຄືໃກ້ວັນທີ່ພຣະເຈົ້າຈະທໍາລາຍ. ເມື່ອໂລດໄດ້ຫລຽວເຫັນຊາຍແປກໜ້າສອງຄົນເດີນທາງມາຫາ ເພິ່ນກໍໄດ້ເຊີນໃຫ້ທັງສອງເຂົ້າໄປນອນພັກເຊົາທີ່ບ້ານຂອງເພິ່ນໃນຄືນນັ້ນ. ບໍ່ດົນຜູ້ຊາຍທັງເມືອງບໍ່ວ່າເຖົ້າແກ່, ຫຼືນ້ອຍໜຸ່ມກໍໄດ້ມາອັ່ງອໍກັນທີ່ປະຕູບ້ານຂອງໂລດ ແລະຮ້ອງບອກໃຫ້ໂລດສົ່ງຊາຍແປກໜ້າທີ່ມາພັກທີ່ບ້ານຂອງເພິ່ນນັ້ນໃຫ້ພວກເຂົາເອົາໄປສົມສູ່. ແຕ່ໂລດໄດ້ປະຕິເສດແລະອອກມາຂ້າງນອກແລະອັດປະຕູໄວ້ແລະໄດ້ເວົ້າຂໍຮ້ອງພວກເຂົາແຕ່ເຂົາກໍບໍ່ຟັງທັງຍັງທໍາຮ້າຍໂລດແລະເທວະດາສອງຕົນນັ້ນກໍດົນບັນດານໃຫ້ຕາຂອງພວກເຂົາມືດມົວໄປແລະຊ່ອຍໂລດໃຫ້ພົ້ນ ( 19: 1-11 ).

ເທວະດາກໍໄດ້ເຮັດໃຫ້ໂລດໄດ້ເຫັນຄວາມຊົ່ວຊ້າຂອງຊາວເມືອງນັ້ນ ໄດ້ເຫັນການເຮັດບາບຂອງພວກເຂົາ, ພຣະເຈົ້າຈະທໍາລາຍເມືອງນັ້ນ. ເທວະດາທັງສອງໄດ້ບອກໃຫ້ໂລດນໍາພາຄອບຄົວອອກຈາກເມືອງໄປ, ໂລດບໍ່ໄດ້ມີ

ຄວາມສົງໃສໃນສິ່ງທີ່ເທວະດາໄດ້ເວົ້າກັບເພິ່ນນັ້ນເລີຍ, ເພາະເພິ່ນເອງກໍໄດ້ຮູ້ແລ້ວວ່າປະຊາຊົນໃນເມືອງນັ້ນເປັນຄົນຖ່ອຍຮ້າຍ ( ໒ ເປໂຕ. ໒: 7-8 ). ແລະໂລດກໍຟ້າວກັບເມືອຍັງເຮືອນຂອງຕົນ ແລະທີ່ມີລູກສາວສອງຄົນແລະຄູ່ຫມັ້ນທີ່ຈະແຕ່ງງານກັບລູກສາວຂອງເພິ່ນ, ໃຫ້ອອກຫນີຈາກເມືອງກ່ອນທີ່ພຣະເຈົ້າຈະທຳລາຍລ້າງເມືອງ. ແຕ່ພວກລູກເຂີຍຄິດວ່າເພິ່ນເວົ້າຫຼິ້ນບໍ່ແມ່ນຄວາມຈິງແລະບໍ່ໄດ້ປະຕິບັດຕາມຄຳແນະນຳ. ແຕ່ເປັນຫນ້າສົງສານ, ການພິພາກສາຂອງພຣະເຈົ້າບໍ່ແມ່ນເຣື່ອງຫລິ້ນຫລືເປັນເຣື່ອງທີ່ຫນ້າຫົວຂວັນ.

ໃນສັງຄົມປັດຈຸບັນນີ້ອາດຍັງມີຄົນບາບຫຼາຍໆ ຄົນຍັງຄົງລອຍນວນຢູ່ໂດຍບໍ່ໄດ້ຖືກພິພາກສາຫຍັງ. ມີສຸຂພາບດີ, ມີຊັບສິນບັດຊິດໃຊ້, ມີຄວາມສນຸກສນານໃນຊີວິດ. ເຂົາເຫຼົ່ານັ້ນໄດ້ຫົວເຍາະເຍີ້ຍຄວາມຄິດທີ່ພວກເຮົາພະຍາຍາມຫຼີກຫນີຈາກການເຮັດຊົ່ວຮ້າຍແລະການຫຼອກລວງຂອງຄວາມບາບ. ເຖິງແມ່ນວ່າຄຣິສຕຽນບາງຄົນທີ່ໄດ້ໃຊ້ຊີວິດຮັບໃຊ້ພຣະເຈົ້າໄດ້ຮັບຄວາມທຸກຍາກລຳບາກຈົນເຖິງຊີວິດເພື່ອເປັນພະຍານໃນການດຳຣົງຊີວິດຢູ່ໃນພຣະເຈົ້າຍັງມີຄວາມສົງໃສວ່າ ດ້ວຍເຫດໃດພຣະເຈົ້າຈຶ່ງປ່ອຍໃຫ້ພວກເຮັດບາບເຫຼົ່ານັ້ນມີຊີວິດຢູ່ໂດຍບໍ່ໄດ້ຮັບໂທດກັມຫຍັງເລີຍຄືທາງດ້ານຈິດວິນຍານຫຼືຮ່າງກາຍກໍດີ. ແຕ່ທີ່ຈິງແລ້ວ, ບໍ່ມີໃຜສາມາດຫຼີກຫນີຈາກບາບກັມທີ່ຕົນເອງໄດ້ກະທຳໄວ້ໄດ້ເລີຍ. ພວກເຮົາຈະເກັບກ່ຽວໃນສິ່ງທີ່ພວກເຮົາໄດ້ຫວ່ານໄວ້ແລ້ວ ເພາະພຣະເຈົ້າຈະຊົງບັນດານໃຫ້ທຸກສິ່ງເກີດຂື້ນເວລາໃດກໍໄດ້. ຄວາມບາບແລະຜົນທີ່ຕາມມາຂອງມັນເປັນເງົາຕາມຕົວໄປ ມັນອາດຈະເກີດທີ່ນີ້ແລ້ວໄປມີຜົນທີ່ອື່ນກໍເປັນໄດ້, ແຕ່ຄວາມຍຸຕິທັມທີ່ຖືກຊັ່ງຊາຈາກພຣະເຈົ້ານັ້ນແມ່ນຈະມີຂື້ນແນ່ນອນເພື່ອໃຫ້ມະນຸດໄດ້ຮັບຄວາມທ່ຽງທັມ. ຄວາມຍິ່ງໃຫຍ່ໃນການພິພາກສາຈະມີມາເຖິງເມື່ອພຣະເຢຊູຄຣິດສະເດັດກັບມາເປັນຜູ້ພິພາກສາ.

ແນ່ນອນທີ່ສຸດຄື ບໍ່ມີຜູ້ໃດຈະຫຼີກຫນີຈາກການກະທຳທີ່ຕົນເອງໄດ້ທຳໄວ້ທຸກຢ່າງ. ພວກເຮົາຫວ່ານສິ່ງໃດກໍຈະໄດ້ເກັບກ່ຽວສິ່ງນັ້ນ.

| |
|---|
| ທ່ານສາມາດບອກຜົນທີ່ຕາມມາຂອງການເຮັດບາບໃນຊີວິດຂອງທ່ານໃນອະດີດ 1 ຢ່າງໄດ້ບໍ່?<br>ຄົນອື່ນໄດ້ຮັບຜົນສະທ້ອນຈາກການເຮັດບາບຂອງທ່ານໃນຄັ້ງນັ້ນຫລືບໍ່? |

## ໒. <u>ພຣະເຈົ້າຊົງມີພຣະເມດຕາ</u>: ປະຖົມມະການ ( 19: 15-17 )

ໃນຕອນທີແລກທີ່ຮູ້ວ່າພຣະເຈົ້າຈະທຳລາຍເມືອງໂຊດົມ, ແຕ່ອັບຣາຮາມບໍ່ໄດ້ກ່າວເຖິງຫຼານຂອງເພິ່ນຄືໂລດທີ່ຍັງອາສັຍຢູ່ໃນເມືອງນັ້ນ, ແຕ່ພຣະເຈົ້າໄດ້ຊົງຮູ້ແລ້ວວ່ານັ້ນຄືຫົວໃຈຂອງເພິ່ນ. ແລະພຣະອົງຊົງຮູ້ວ່າມີບໍ່ເຖິງ10 ຄົນຢູ່ໃນເມືອງນັ້ນເປັນຄົນສິນທັມ. ໂລດໄດ້ຕັ້ງຖິ່ນຖານໃຫມ່ທີ່ແຜ່ນດິນແຖບແມ່ນ້ຳຈໍແດນທີ່ອຸດົມສົມບູນເພື່ອທີ່ຈະທຳມາຄ້າຂາຍ, ໃນການເຮັດຢ່າງນັ້ນໂລດໄດ້ນຳພາຄອບຄົວຂອງຕົນເຂົ້າໄປຕັ້ງຖິ່ນຖານຢູ່ໃນເມືອງທີ່ມີສິນທັມເສື່ອມຊາມ.

ແຕ່ໂລດບໍ່ໄດ້ຍິນດີແລະເຮັດຕາມສາສນາຂອງພວກເຂົາທີ່ກຳລັງແຜ່ລາມ, ຄືເພິ່ນໄດ້ອະນຸຍາດໃຫ້ລູກສາວແຕ່ງງານກັບຄົນໂຊດົມ ( ໃນຂໍ້ 19:14 ). ຜູ້ຊາຍພວກນີ້ໄດ້ຮັບເອົາພຣະເຈົ້າຂອງໂລດ, ບາງທີເພິ່ນອາດຈະໄດ້ເວົ້າລົມກັບພວກເຂົາໃນເຣື່ອງພື້ນຖານຄວາມຊອບທັມຂອງພຣະເຈົ້າໃຫ້ເຂົາຟັງ. ເຖິງຢ່າງໃດ, ພວກເຂົາກໍໄດ້ຮູ້ແລະເຫັນການທີ່ເພິ່ນໄດ້ເລືອກທີ່ຈະດຳຣົງຊີວິດຢູ່ທ່າມກາງພວກເຂົາ ແຕ່ມີຊີວິດທີ່ແຕກຕ່າງຈຶ່ງເປັນເຫດໃຫ້ເຂົາໄດ້ເຫັນທັງເຊື່ອແລະມີຄວາມຊື່ນຊົມ (ປຖມກ. 19: 14 )

ພຣະເຈົ້າໄດ້ຊົງປົດປ່ອຍໂລດໃຫ້ພົ້ນຈາກໄພພິບັດບໍ່ແມ່ນຍ້ອນຄວາມດີຂອງເພິ່ນແຕ່ຍ້ອນພຣະຄຸນແລະຄວາມຮັກທີ່ພຣະອົງມີຕໍ່ອັບຣາຮາມເພາະໂລດຜູ້ເປັນຫຼານກໍແມ່ນຄົນໃນຄອບຄົວດຽວກັນ ( ຂໍ້ 29 ) ຖ້າພຣະເຈົ້າຫາກພໍພຣະທັຍທີ່ຈະປະໂລດແລະຄອບຄົວໃຫ້ຖືກທຳລາຍພ້ອມກັບທັງສອງເມືອງທີ່ຊົ່ວຮ້າຍ ພຣະອົງກໍບໍ່ໄດ້ຜິດສັນຍາກັບອັບຣາຮາມແຕ່ຢ່າງໃດເບິ່ງໃນ ( 18 : 32 ), ແຕ່ຂອບພຣະຄຸນພຣະເຈົ້າທີ່ພຣະອົງຍັງມີພຣະທັຍເມດຕາແລະຊົງປະທານໃຫ້ຫຼາຍາກວ່າທີ່ເຮົາຂໍແລະສົມຄວນທີ່ຈະໄດ້ຮັບ.

ດ້ວຍພຣະຄຸນຂອງພຣະເຈົ້າພຣະອົງໄດ້ຊົງເຕືອນໂລດຢູ່ຕລອດເວລາຢ້ານຈະຊ້າໃນການເດີນທາງອອກຈາກເຂດອັນຕະລາຍ. ເມື່ອເຖິງເວລາເຊົ້າມາການເດີນທາງຂອງໂລດກໍຊ້າລົງ, ເທວະດາກໍໄດ້ ເລັ່ງ ໃຫ້ຄອບຄົວຂອງເພິ່ນ

ເດີນທາງໂດຍໄວຄືໂລດ, ເມັຍຂອງເພິ່ນແລະລູກສາວອີກສອງຄົນ ໃຫ້ມຸ້ງໜ້າ ສູ່ພູເຂົາ ທາງໜ້າໂດຍບໍ່ໃຫ້ຫຼຽວຄືນຫຼັງ. ຄວາມຈິງກໍຄືກໍເພື່ອຄວາມປອດພັຍຂອງມະນຸດໃນການເດີນທາງໃຫ້ໄວເທົ່າທີ່ຈະໄວໄດ້. ເພື່ອຈະໄດ້ໄປຢູ່ໃກ້ສະຖານທີ່ງ ປອດພັຍຄືວັນທີ່ພວກເຮົາມີຄວາມເຊື່ອໝັ້ນໃຈແທ້.

| |
|---|
| ຄິດຄືນຫລັງເບິ່ງວ່າມີຫຍັງແດ່ທີ່ພຣະເຈົ້າເຄີຍມີພຣະຄຸນແລະໄດ້ສະແດງພຣະເມດຕາແກ່ທ່ານ |

## 3. ຜົນຂອງບາບນໍາໄປສູ່ຄວາມພິນາດຈິບຫາຍ: ( ປະຖົມມະການ 19: 23-26 )

ໂລດມີຄວາມກັງວົນໃນການທໍາມາຫາກິນແລະມີຊີວິດລອດພົ້ນຈາກຄວາມລໍາບາກຢູ່ແຖບພູເຂົາ, ດັ່ງນັ້ນເພິ່ນຈຶ່ງໄດ້ຮ້ອງຂໍຕໍ່ເທວະດາຕົນນັ້ນຄືຢາກຈະໄປຢູ່ເມືອງນ້ອຍແຫ່ງນຶ່ງຊື່ ໂຊອາ, ທີ່ເປັນບ່ອນຮາບພຽງດີ. ເທວະດາທັງສອງກໍຕົກລົງຕາມນັ້ນຄືຈະບໍ່ທໍາລາຍເມືອງນີ້ແລະອະນຸຍາດໃຫ້ຕາມຄໍາທີ່ຂໍ. ແຕ່ເທວະດາຕົນນຶ່ງໄດ້ເຕືອນເພິ່ນວ່າ "ຮີບແລ່ນໄປໄວໆ ! ເຮົາຈະບໍ່ເຮັດສິ່ງໃດຈົນກວ່າເຈົ້າຈະໄປຮອດທີ່ນັ້ນແລະຢ່າໄດ້ຫຼຽວຄືນຫຼັງ..... ຫຼືບໍ່ດັ່ງນັ້ນເຈົ້າຈະຖືກຈົມລົງແລະພັດໜີໄປ." ( ປຖມກ. 19: 17 ). ແຕ່ເມັຽຂອງໂລດຫຼຽວຄືນຫຼັງ, ສະນັ້ນ ນາງຈຶ່ງໄດ້ກາຍເປັນເສົາເກືອ. ຍ້ອນວ່ານາງບໍ່ຟັງຄໍາສັ່ງຢ່າງເດັດຂາດ, ນາງ ໄດ້ຫຼຽວຄືນຫຼັງ. ເພາະໃນສ່ວນເລິກແລ້ວນາງຍັງຄິດເຖິງຍາດພີ່ນ້ອງແລະບ້ານເກີດຂອງນາງ, ຍ້ອນການບໍ່ເຊື່ອຟັງຂອງນາງຈຶ່ງເຮັດໃຫ້ນາງໜີບໍ່ພົ້ນ, ແລະນາງກໍຖືກສາບແສ່ງຢູ່ລະຫວ່າງທາງທີ່ຫຼົບໜີ.

ເປັນຫຍັງຄວາມບາບທີ່ເກີດຂຶ້ນຢູ່ທີ່ເມືອງນັ້ນຈຶ່ງຮ້າຍແຮງທີ່ສຸດ? ເພາະການບູຊານະມັສການຂອງພວກເຂົາຄືການສົມສູ່ເພດດຽວກັນທີ່ກ່າວໄວ້ຢູ່ໃນຂໍ້ 4 . ແລະຕໍ່ມາກໍມີຢູ່ໃນກົດບັນຍັດຂອງໂມເຊຄື ( ເລວີ. 18: 6-18, 22-25, 20: 11-17, 19-21 ). ແລະມີຢູ່ໃນພຣະຄັມພີໃໝ່ຄືການກະທໍາທີ່ຊົ່ວຊ້າໃນເຣື່ອງການສົມສູ່ເພດດຽວກັນແລະຈະໄດ້ຖືກຕັດສິນລົງໂທດຄືຢູ່ໃນ ( ໂຣມ: 1: 26-27, 1ກລທ. 6: 9, 1ຕມທ.1: 9-10 .

ມີຫຼັກຖານທີ່ກ່າວໄວ້ໃນພຣະທັມເຖິງແຂກສອງຄົນທີ່ມາຢ້ຽມຢາມໂລດຫຼັກຖານທີ່ປາກົດໃຫ້ເຫັນເຖິງຄວາມຊົ່ວຊ້າຂອງຊາວເມືອງກໍຄືບັນດາພວກຜູ້ຊາຍທັງເຖົ້າແລະໜຸ່ມໄດ້ຂົ່ມຂູ່ທີ່ຈະມີການສົມສູ່ກັບແຂກຕ່າງເມືອງທັງສອງທີ່ມາພັກຢູ່ທີ່ບ້ານຂອງໂລດ. ພວກເຂົາແມ່ນສົນໃຈແຕ່ພຽງສນອງຄວາມຕ້ອງການທາງດ້ານເພດເທົ່ານັ້ນ, ບໍ່ໄດ້ມີຄວາມສົນໃຈວ່າຈະເປັນສິ່ງຖືກຕ້ອງແລະຍຸຕິທັມຫຼືບໍ່ກໍຕາມ, ແລະຍິ່ງກວ່ານັ້ນກໍຄືເຫັນຊີວິດຂອງຄົນອື່ນບໍ່ມີຄຸນຄ່າແລະບໍ່ສົນໃຈຫຍັງຈັກຢ່າງ.

ຄ່າຈ້າງຂອງຄວາມຜິດບາບຄື "ຄວາມຕາຍ" ( ແນ່ນອນ ) ( ໂຣມ 6: 23 ). ຖ້າຄວາມບາບບໍ່ມີການແກ້ໄຂແລະເຊົາເຮັດຕໍ່ໄປ ມັນກໍຈະທໍາລາຍລ້າງຮາກເຫງົ້າຄວາມເປັນມະນຸດທີ່ມີສະຕິສົມບູນດ້ວຍຄວາມຮັກທີ່ມີຕໍ່ພຣະເຈົ້າແລະຕໍ່ຄົນອື່ນໆ . ຄວາມບາບໄດ້ຂ້າຄວາມສໍາພັນທີ່ດີ, ຄວາມຊຸ່ມຊື່ນຍິນດີທີ່ສົມຄວນໄດ້ຮັບ, ເຮັດໃຫ້ຄົນອື່ນເຈັບປວດ, ຂ້າຄວາມຮູ້ສຶກຮັບຜິດຊອບຊົ່ວດີ, ບໍ່ເຄີຍມີພຽງພໍຈັກເທື່ອ, ຄວາມບາບປິດບັງຄວາມຈິງ, ຂ້າຄວາມສາມາດທີ່ຈະເຫັນແສງສວ່າງ ແລະພົບກັບທາງຂອງພຣະເຈົ້າ ແລະເຮັດໃຫ້ຄວາມຈິງນັ້ນເຕັມບໍຣິບູນ. ຫ່າງໄກຈາກການຍອມສາລະພາບບາບ ແລະຍອມໃຫ້ພຣະຄຣິດເປັນຜູ້ນໍາໃນຊີວິດ, ແລະຄວາມບາບຂ້າຄວາມຫວັງ ທີ່ຈະໄດ້ຮັບຊີວິດອັນຕລອດໄປເປັນນິດ.

| |
|---|
| ຄົນທີ່ໃກ້ຊິດທ່ານໄດ້ຮັບຜົນສະທ້ອນຢ່າງໃດ ຈາກຊີວິດການຕິດຕາມພຣະເຈົ້າຂອງທ່ານ? |

## 4. ການໄກ່ເກັ່ຽສາມາດເຫັນຄວາມແຕກຕ່າງໄດ້: ( ປະຖົມມະການ 19: 27-29 )

ໃນຂໍ້ 27, ສາມາດສລູບໄດ້ວ່າອັບຣາຮາມເປັນຜູ້ທີ່ເຄັ່ງຄັດ ແລະປະຕິບັດເປັນປົກກະຕິຄືການໄປຂາບໄຫວ້ນະມັສການພຣະເຈົ້າແຕ່ເຊົ້າໆປະຈໍາ. ມີຈໍານວນຫຼາຍຄົນທີ່ເຄີຍໄດ້ຈົ່ມໃຫ້ຂ້າພະເຈົ້າຟັງໃນເຣື່ອງທີ່ເຂົາບໍ່ໄດ້ເຫັນຄວາມ

ແຕກຕ່າງເກີດຂຶ້ນຫຼາຍປານໃດໃນການອະທິຖານຂອງເຂົາສະນັ້ນເຂົາຈິ່ງມີການອະທິຖານນ້ອຍລົງ. ຖ້າຫາກທ່ານຍັງສົງໃສໃນຄໍາອະທິຖານຂອງທ່ານ, ຂ້າພະເຈົ້າຂໍຫນູນໃຈໃຫ້ທ່ານຈົ່ງຂຽນລົງໃນປຶ້ມບັນທຶກ- ຄືຄໍາອະທິຖານທີ່ພຣະເຈົ້າໄດ້ຕອບແລ້ວແລະຍັງບໍ່ທັນໄດ້ຕອບເທື່ອ. ສິ່ງນັ້ນຈະເປັນສິ່ງທີ່ເປີດຕາຂອງທ່ານໃຫ້ມີປະສົບການແລະຢ່າລືມທີ່ຈະເລົ່າໃຫ້ຂ້າພະເຈົ້າຟັງດ້ວຍ. ເພາະຂ້າພະເຈົ້າໄດ້ມີປະສົບການມາກັບຕົວເອງແລ້ວຄືໄດ້ເຂົ້າໃຈແລະຮູ້ຈາກອະດີດຜ່ານມາວ່າມີຫຍັງແດ່ທີ່ພຣະອົງໄດ້ຊົງຕອບແລະມີຜົນປາກົດແລ້ວ, ແລະຂ້າພະເຈົ້າໄດ້ຂອບພຣະຄຸນພຣະອົງຫຼືຍັງ.

ພຣະເຈົ້າບໍ່ໄດ້ຕອບຄໍາອະທິຖານຂອງພຣະເຈົ້າຫມົດດອກ (ຢ່າງນ້ອຍສິ່ງເຫຼົ່ານັ້ນກໍຢູ່ໃນການບັນທຶກຄໍາອະທິຖານຂອງຂ້າພະເຈົ້າ.) ແລະຂໍໃຫ້ພວກເຮົາທຸກຄົນເວົ້າຢ່າງນັ້ນ. ໃນເມື່ອພຣະເຈົ້າສັ່ງໃຫ້ພວກເຮົາມີການອະທິຖານ, ດັ່ງນັ້ນ ພຣະອົງຈະບໍ່ເຮັດຫຼິ້ນຫົວກັບພວກເຮົາ. ພຣະອົງຈະຊົງຍົກຄໍາອະທິຖານຂອງພວກເຮົາຂຶ້ນ ດ້ວຍຄວາມຮັກ. ຄວາມຮູ້, ປັນຍາ, ຄວາມດີ, ແລະຈຸດປະສົງທັງຫມົດ. ຂ້າພະເຈົ້າມີຄວາມແນ່ໃຈວ່າຜູ້ທີ່ຫຼົງຫາຍແລະບໍ່ເຊື່ອພຣະເຈົ້າທີ່ຂ້າພະເຈົ້າໄດ້ອະທິຖານເພື່ອນັ້ນ ພຣະເຈົ້າຈະຊົງທໍາງານໃນຊີວິດຂອງເຂົາເຈົ້າແລະມີໂອກາດໄດ້ເຊື່ອໃນພຣະອົງ.

ຍ້ອນການຕອບສນອງຄືຄວາມເຊື່ອຟັງຂອງອັບຣາຮາມ, ພຣະເຈົ້າຈຶ່ງໄດ້ປົດປ່ອຍໂລດ ໃຫ້ພົ້ນຈາຄວາມບາບແລະຜົນທີ່ຕາມມາຂອງມັນ, ແລະເພິ່ນກໍຍັງໄດ້ຊ່ອຍຄົນອື່ນໃຫ້ໄດ້ພົ້ນນໍາອີກ. ທ່ານໄດ້ຈົດຊື່ລົງໃນປຶ້ມບັນທຶກໄວ້ຫຼືຍັງຄືບຸກຄົນທີ່ທ່ານໄດ້ອະທິຖານເພື່ອເຂົາໂດຍຂຽນຊື່ຂອງເຂົາລົງໄປແລ້ວ, ແລະຂີດຫມາຍວ່າໄດ້ຮັບການຕອບສນອງຈາກການອະທິຖານຫຼືຍັງແລະຕອບແບບໃດ? ສໍາລັບໂລດແລະຄອບຄົວກໍເປັນເຣື່ອງນຶ່ງທີ່ຈະຍົກມາເປັນພະຍານໄດ້ເປັນຢ່າງດີເພາະມີຄວາມແຕກຕ່າງເກີດຂຶ້ນ. ເພິ່ນໄດ້ບັນທຶກໄວ້ແນວໃດໃນຂໍ້ພຣະທັມ ປຖກ. 19 ທີ່ໄດ້ບອກເຖິງຄວາມບາບແລະຜົນທີ່ຕາມມາຂອງມັນ?

| |
|---|
| ທ່ານໄດ້ສັງເກດເຫັນຄວາມພິນາດຈິບຫາຍຈາກບາບສ່ວນຕົວແລະບາບຂອງສັງຄົມຢ່າງໃດແດ່? |

- ພຣະເຈົ້າໄດ້ປະກາດວ່າຈະພິພາກສາຄວາມບາບ, ແລະກໍເປັນໄປຕາມເວລາແລະຕາມທາງຂອງພຣະອົງ.
- ຍ້ອນພຣະຄຸນແລະຄວາມເມດຕາ ພຣະເຈົ້າຈະໄດ້ປົດປ່ອຍມະນຸດໃຫ້ພົ້ນຈາກບາບແລະຈາກຜົນທີ່ຕາມມາຂອງມັນ.
- ຄວາມບາບແລະຜົນທີ່ຕາມມາຂອງມັນສາມາດເກີດຄວາມຈິບຫາຍແກ່ຄົນອື່ນແລະຜູ້ທີ່ກະທໍາເຊັ່ນດຽວກັນ.
- ພຣະເຈົ້າໄດ້ຕອບສນອງຕໍ່ຜູ້ໄກ່ເກັ່ຽທີ່ຊ່ອຍຄົນອື່ນໃຫ້ພົ້ນຈາກການເຮັດບາບແລະຜົນທີ່ຕິດຕາມມາຂອງມັນ.

( ອຸປຖັມໂດຍ ລາວຊາວເທີນແບັບຕິສສັມພັນ lsbf.org )